ໂຮມເລື່ອງສຳລັບເດັກ ຊຸດ

# ເພື່ອຊີວິດ ແລະ ສິ່ງແວດລ້ອມ



**GAPE/BCP/IUCN**

# ເພື່ອຊີວິດ ເພື່ອສິ່ງແວດລ້ອມ

ຈັດພິມໂດຍ: ອົງການຊ່ວຍເຫລືອໝູ່ບ້ານຕ່າງໄກ
ສອກຫລີກກ່ຽວກັບການສຶກສາ
ເມືອງປະທຸມພອນ ແຂວງຈຳປາສັກ
( GAPE )

ຮູບແຕ້ມ : ທອງໃບ ໂພທິສານ
ຈັດໜ້າ : ສິນພອນ ທຸນນາວົງ
ຈຳນວນພິມ: 3.000 ຫົວ
ຕາມທະບຽນເລກທີ : 79 / ພຈ 05022003.

ພິມທີ່ ໂຮງພິມສຶກສາ, 2003.

©ສະຫງວນລິຂະສິດ

# ສາລະບານ


**ຄຳນຳ**

1. **ຜູ້ບຸກລຸກ** ແສງພູໄຊ ອິນທະວິຄຳ .................................... 2
2. **ຄຳອ້ອນວອນຂອງຕົ້ນໄມ້** ໂສພາ ອິນທະວົງສາ ............. 5
3. **ເຈົ້າປ່າ** ແດງ ປະທຸມທອງ ............................................ 8
4. **ພະຍາງູສິງ** ຈັນເພັດ ຄຳຟອງ ........................................ 11
5. **ປ່ອຍລີງ** ສົມພຽນ ພົງສະຫວັດມີໄຊ .................................. 14
6. **ອູດແລນແປນປ່າ** ບຸນທະວີ ໂຄຕະມີ ............................ 17
7. **ແລນອົບພະຍົບ** ໄຊຊະນະ ຈັນທະອຸດົມ ........................ 20
8. **ອ້າຍຊ້າງຢູ່ໃສ** ພັນທະນາສອນ ພົມພັກດີ .................... 23
9. **ນົກອະນຸລັກ** ວຽງໂຂງ ສຸກກະເສີມ .......................... 26
10. **ນົກຍູງຟ້ອນງາມ** ສົມສະຫວັນ ເຄື່ອງເທພາລິດ ........ 29
11. **ເດັກຄຳຮູ້** ວຽງພອນ ວິໄລວົງ .................................. 32
12. **ທ້າວແດງນ້ອຍ** ອັນກາບ ອັນທະມະສຸວັນ ................. 35
13. **ສຽງຈົ່ມຈາກຕົ້ນຈອງ** ເວີນນະຈິດ ກິດຕິຄຸນ ............. 38
14. **ເບິ່ງຄືຢາດນ້ຳຕາ** ບຸນມີ ອ່ອນໂກສີ ........................... 41
15. **ນົກເອົາຄືນຄອນ** ອຸດອນ ສີມຸນຕີ .............................. 44
16. **ເປັດນ້ຳໂຊກດີ** ວັນນາ ອຸດໄທປະທຸມມາ ................. 47
17. **ນາຍພານກັບຫມາຫມານ** ສົມຫວັງ ນະວົງສົນ................ 50
18. **ສົງແມ່ອ້ອຍສາ** ອ່ອນສີ ປະຊາວົງ ............................ 53

# ຄຳນຳ

ປື້ມຫົວທີ່ທ່ານກຳລັງຈັບຢູ່ນີ້ ກໍກເລີ່ມຂຶ້ນຈາກແນວຄິດນ້ອຍໆ ຂອງຄົນໆໜຶ່ງທີ່ມີແນວຄິດຮັກທຳມະຊາດ - ສິ່ງແວດລ້ອມເທົ່າໆ ກັບຊີວິດ, ເພາະສິ່ງແວດລ້ອມທາງທຳມະຊາດ ແມ່ນສ່ວນໜຶ່ງຂອງຊີວິດມະນຸດ. ຫາກບໍ່ມີທຳມະຊາດ ມະນຸດອາດບໍ່ສາມາດມີຊີວິດຢູ່ໄດ້; ດ້ວຍເຫດນັ້ນປື້ມຫົວນີ້ຈຶ່ງກໍໄດ້ວ່າເປັນສ່ວນໜຶ່ງທີ່ຈະປະກອບສ່ວນໃຫ້ແກ່ການສ້າງຈິດສຳນຶກໃຫ້ຄົນຮຸ່ນປັດຈຸບັນ ແລະ ຮຸ່ນສືບທອດ ໄດ້ເຂົ້າໃຈເຖິງຄວາມຈຳເປັນອັນແທ້ຈິງຂອງມະນຸດເຮົາທີ່ຈະຕ້ອງປົກປ້ອງສັບພະສິ່ງທຳມະຊາດ ໃຫ້ຢືນຍົງຄູ່ລູກຫລານ ພວກເຮົາສືບໄປພາຍໜ້າ .

ແນວໃດກໍຕາມ, ກວ່າປື້ມຫົວນີ້ຈະກຳເນີດເກີດຂຶ້ນມາໄດ້ ກໍຜ່ານໄລຍະທາງອັນສັບສົນ ແລະ ຍາວໄກພໍສົມຄວນ, ນັບຕັ້ງແຕ່ມື້ມີການຮ່ວມມືກັບຄັ້ງທຳອິດກັບປ່າສະຫງວນດົງຫົວສາວ, ເຊິ່ງຂຶ້ນກັບຄວາມຮັບຜິດຊອບຂອງຂະແໜງປ່າໄມ້ແຂວງຈຳປາສັກ ໃຫ້ທຶນສະ

ຫນັບສະຫນູນ ຄວາມຄິດສ້າງສັນດັ່ງກ່າວ ຈົນນາເກີດ ຂັ້ນຕອນການບັນນາທິການ ຕະລອດຮອດການຈັດ ຫນ້າເປັນເຫລັ້ມ, ເຊິ່ງກືວ່າໄດ້ຜ່ານຂັ້ນຕອນຫລາຍຂັ້ນ ແລະ ສົມບູນດ້ານຄວາມຄິດທີ່ຫລາກຫລາຍ ຈາກ ຄວາມຄິດຂອງນັກຂຽນທຸກໆທ່ານ ເຊິ່ງສະແດງອອກ ຢູ່ໃນບົດເລື່ອງ, ກາບກອນທີ່ໂຮມຢູ່ໃນປື້ມຫົວນີ້ .

ໃນແຕ່ລະບົດເລື່ອງ, ກາບກອນ ທີ່ບັນທຶກລົງໃນ ປື້ມຫົວນີ້ລ້ວນແຕ່ແມ່ນຄວາມຄິດສ້າງສັນເພື່ອຮຽກ ເອີ້ນເຊີນຊວນທຸກຄົນບໍ່ວ່າຈະແມ່ນຢູ່ພາກເຫນືອ, ພາກກາງ, ພາກໃຕ້ ໃນທົ່ວປະເທດລາວ ໃຫ້ພ້ອມພຽງ ຮຽງກັນຫັນຫນ້າມາມອງເບິ່ງສະພາບຄວາມເປັນຈິງ ທາງທຳມະຊາດ - ສິ່ງແວດລ້ອມທີ່ກຳລັງກືກຄຸກຄາມ ແລະ ນັບມື້ນັບຫລຸດຫນ້ອຍຖ້ອຍລົງ ອັນມີຜົນກະທົບ ດ້ານລົບຕໍ່ກັບຊີວິດຂອງຄົນເຮົາໂດຍກົງ .

ການທີ່ທຳມະຊາດ ກືກຄຸກຄາມຮ້າຍແຮງກໍອາດ ເນື່ອງມາຈາກຫລາຍສາເຫດເຊັ່ນ : ການເພີ່ມຂື້ນ ຂອງພົນລະເມືອງ ຄວາມຕ້ອງການເພື່ອການຄອງ ຊີບເພີ່ມຂື້ນສົມທົບໃສ່ກັບຄວາມບໍ່ເຂົ້າໃຈຕໍ່ກັບຄວາມ ສຳຄັນຂອງທຳມະຊາດກັບຊີວິດ. ເມື່ອເປັນແນວນັ້ນ ຈຶ່ງເຮັດໃຫ້ການນຳໃຊ້ ແຫລ່ງທຳມະຊາດບໍ່ແທດ ເຫມາະ,ເປັນເຫດໃຫ້ການນຳໃຊ້ແຫລ່ງຊັບພະຍາກອນ

ທຳມະຊາດ ບໍ່ດຸ່ນດ່ຽງ, ບັນຫາໄພແລ້ງ ແລະ ກ້ອນເກີດ ຂຶ້ນຢ່າງຫລວງຫລາຍອຸບປະພູນກໍມີການປ່ຽນແປງ, ມີ ຜົນກະທົບຮ້າຍແຮງຕໍ່ການຜະລິດກະສິກຳຂອງປະຊາ ຊົນກ້າວໄປສູ່ຄວາມອຶດຢາກຫມາກແຫ້ງ .

ເຖິງແມ່ນວ່າປື້ມຫົວນີ້ຈະສຳເລັດການຈັດຫນ້າ ເປັນເຫລັ້ມຮຽບຮ້ອຍຕັ້ງດົນນານແລ້ວກໍຕາມ, ແຕ່ ການຈັດພິມເປັນປື້ມໃຫ້ສົມບູນກໍພົບກັບອຸປະສັກດ້ານ ແຫລ່ງທຶນການພິມນັບເປັນເວລາ 3 ປີ ຈົນມາຮອດ ວັນທີ 27 ມັງກອນປີ 2003, ຈຶ່ງໄດ້ມີການນຳສະເຫນີ ຄວາມຄິດດ້ານການຈັດພິມເປັນເຫລັ້ມສົມບູນຈາກ ໂຄງການຊ່ວຍເຫລືອຫມູ່ບ້ານຫ່າງໄກສອກຫລີກກ່ຽວ ກັບການສຶກສາເມືອງປະທຸມພອນແຂວງຈຳປາສັກ (GAPE) ໂດຍ ທ່ານອ່ຽນແບຣ ເຊິ່ງເປັນຂີດຫມາຍ ເຖິງວັນເວລາແຫ່ງຄວາມດີໃຈໃຫ້ນາເຖິງຜູ້ລິເລີ່ມ ຄວາມຄິດນີ້ເປັນຢ່າງຍິ່ງ, ເພື່ອໃຫ້ປື້ມຫົວນີ້ໄດ້ຄອດ ອອກມາ ເພື່ອຜູ້ອ່ານຈະໄດ້ສຳຜັດກັບຄວາມຈິງສ່ວນ ຫນຶ່ງທີ່ຖືກບັນທຶກໄວ້ .

ແນວໃດກໍຕາມ, ໃນການະຜູ້ລິເລີ່ມຄວາມຄິດນີ້ ຍັງຖືວ່າສະພາບຄວາມຈິງທາງທຳມະຊາດທີ່ບັນທຶກໃນ ປື້ມຫົວນີ້ເປັນພຽງສ່ວນຫນຶ່ງທີ່ສະແດງອອກເທົ່ານັ້ນ, ພວກເຮົາຈະຕ້ອງອອກແຮງໃຫ້ຫລາຍກວ່ານີ້ ເພື່ອສະ

ທ້ອນຄວາມສຳຄັນທາງທຳມະຊາດອອກມາໃຫ້ຫລາຍກວ່າເກົ່າ ແລ້ວພວກເຮົາຈະຫລິງເຫັນຄຸນຄ່າສິ່ງແວດລ້ອມທຳມະຊາດ ແລະ ຄົນຫລາຍຂຶ້ນ .

ດ້ວຍເຫດ ແລະ ຜົນຂ້າງເທິງນີ້, ຂ້າພະເຈົ້າຂໍສະແດງຄວາມຂອບໃຈຢ່າງຫລວງຫລາຍນຳທ່ານອ່ຽນແບຣ ທີ່ຍັງເຫັນຄວາມສຳຄັນຂອງຄວາມຄິດນ້ອຍໆນີ້ ແລະ ໃຫ້ການສະຫນັບສະຫນູນທຶນພິມປື້ມດັ່ງກ່າວນີ້ ເພື່ອປະກອບສ່ວນໃຫ້ແກ່ຄົນຮຸ້ນຫນຸ່ມໄດ້ສຶກສາຮຽນຮູ້ຈາກປື້ມຫົວນີ້ສ່ວນໃດສ່ວນຫນຶ່ງ, ເພື່ອພ້ອມກັນປົກປັກຮັກສາສິ່ງແວດລ້ອມທາງທຳມະຊາດ ໃຫ້ອຸດົມສົມບູນຕະຫລອດຊົ່ວລູກຊົ່ວຫລານ ແລະ ໃຫ້ເຂົາເຈົ້າໄດ້ຮຽນຮູ້ເຖິງຄຸນຄ່າທຳມະຊາດ ແລະ ຊີວິດຂອງເຈົ້າເອງ .

ວຽງຈັນ, ວັນທີ 5/02/03

ແສງພູໄຊ ອິນທະວິຄຳ



# ຜູ້ບຸກລຸກ

**ແສງພູໄຊ ອິນທະວີຄຳ**

ນານມາແລ້ວຍັງມີຝູງກວາງຈຳນວນຫລວງຫລາຍ ອາໄສຢູ່ປ່າແຄມຫ້ວຍຕວຍ, ທຸກເຊົ້າແລງຝູງກວາງພາກັນອອກໄປຫາກິນຫຍ້າ, ດື່ມນ້ຳ ແລະຜິງແດດຕາມແຄມຫ້ວຍຢ່າງມີຄວາມສຸກ.

ຮຸ່ງເຊົ້າຂອງມື້ໜຶ່ງ ຝູງກວາງກໍ່ອອກໄປຫາກິນຕາມເຄີຍ. ແຕ່ພໍຂ້າມຫ້ວຍນ້ອຍໄປຫາທົ່ງຫຍ້າ ກວາງຫົວໜ້າຝູງກໍ່ຕົກສະເງີ້ເມື່ອເຫັນກວາງແມ່ໂຕໜຶ່ງຖືກກະຕ່ຳເຕັງຄໍ ດີ້ນຣົນໃກ້ຈະຕາຍ ມັນຈຶ່ງເຂົ້າໄປເອົາເຂົາງັດຂອນໄມ້ກະຕ່ຳນັ້ນອອກ, ກວາງແມ່ຈຶ່ງພົ້ນອັນຕະລາຍໄປໄດ້.

ກວາງຫົວໜ້າຝູງມີຄວາມສົງໃສ ເພາະວ່າແຕ່ໃດໆມາ ບໍ່ມີໃຜກ້າບຸກລຸກປ່າສະຫງວນທີ່ສະຫງົບແຫ່ງນີ້, ມັນຈຶ່ງອອກໄປລີ້ຢູ່ປ່າຕຶບແຄມຫ້ວຍໃກ້ໆ ເພື່ອຈອບເບິ່ງເຫດການ. ບໍ່ພໍຄາວມັນກໍເຫັນຄົນສາມຄົນ ໃນມືຖືປືນຄົບຊຸດ ຍ່າງສົນທະນາກັນເຂົ້າມາໃນປ່າ.

24 / VII

- ກະຕ່າໃຫຍ່ຂະໜາດນີ້ ມັນຍັງໜີໄປໄດ້ ບໍ່ໜ້າເຊື່ອເວີຍ.

- ຕ້ອງມີຫລາຍຕົວແນ່ນອນ ມັນຈຶ່ງຊ່ວຍກັນໜີໄປໄດ້ !

ເມື່ອໄດ້ຮູ້ເຫດການລະອຽດ ກວາງຫົວໜ້າຈຶ່ງເອີ້ນເອົາຝູງກວາງປະຊຸມດ່ວນ :

- ດຽວນີ້ ມີຄົນບໍ່ດີບຸກເຂົ້າປ່າລ່າສັດເຖິງຖິ່ນຫາກິນຂອງພວກເຮົາແລ້ວ, ຂໍໃຫ້ເພີ່ມຄວາມລະມັດລະວັງກວ່າເກົ່າ !

ມື້ໜຶ່ງໃນຂະນະທີ່ຝູງກວາງກຳລັງກິນຫຍ້າອ່ອນໃນຕົ້ນລະດູຝົນ ບັງເອີນກໍ່ມີສຽງປືນດັງຂຶ້ນກ້ອງປ່າດົງຕົນເຂດຫ້ວຍຕວຍ.

- ປັ້ງ ! ປັ້ງ ! ປັ້ງ .

- ຮາ ໆ ! ຮາ... ມື້ນີ້ ພວກເຮົາມີອາຫານອັນແຊບນົວໃຫ້ກິນແລ້ວ ຮາໆ ! ...

ພວກນາຍພານຍິງກວາງໄດ້ແລ້ວ ກໍ່ກຽມຫາມກວາງຕົວນັ້ນອອກຈາກດົງໜີໄປ ພໍດີຊາວບ້ານນາບ່ອນ ທີ່ຢູ່ໃກ້ໄດ້ຍິນສຽງປືນ, ຈຶ່ງແຕ່ງກັນອອກມາລັດ ແລະ ຄຸມໂຕນາຍພານທີ່ລັກລອບບຸກລຸກເຂົ້າມາຫາຍິງສັດໃນເຂດຫວງຫ້າມ ສົ່ງໃຫ້ນາຍບ້ານ ເພື່ອອົບຮົມສັ່ງສອນ ແລະ ປັບໃໝໃສ່ໂທດຕາມລະບຽບບ້ານເມືອງ.



# ຄຳອ້ອນວອນຂອງຕົ້ນໄມ້

**ໄຊພາ ອິນທະວົງສາ**

ວາລະສານ ວັນນະສິນ

ຕັ້ງແຕ່ກີ້ແຕ່ກ່ອນ, ສັດ ແລະ ຕົ້ນໄມ້ປາກເປັນ. ໃນປ່າດົງແຫ່ງໜຶ່ງມີຕົ້ນໄມ້ຫນາຕຶບເຊັ່ນ ໄມ້ຍູງ, ໄມ້ຍາງ, ໄມ້ແຕ້, ໄມ້ດູ່ ຫລາກຫລາຍພັນໄມ້ ຢູ່ກັນມາດ້ວຍຄວາມຊຸ່ມເຢັນ. ສັດສາວາສິ່ງທັງຫລາຍ ກໍ່ອາໄສຢູ່ນີ້ ມື້ໜຶ່ງ ຕົ້ນໄມ້ນ້ອຍ ພວມກຳລັງຮຽນປາກ ຮ້ອງຖາມແມ່ວ່າ :

- ແມ່ຕົ້ນໄມ້ພວກເຮົານີ້ ມີປະໂຫຍດຫຍັງແດ່?

- ກະມີລະບໍລູກເອີຍ! ເປັນຮົ່ມເງົາ, ເປັນຫມາກ, ເປັນທີ່ຢູ່ອາໄສ ແລະ ດຳລົງຊີວິດຂອງສັດປ່າທັງຫລາຍ.

ໃນຂະນະແມ່ລູກລົມກັນ, ກໍມີລີງແມ່ນານໂຕຫນຶ່ງມາຂໍພັກເຊົາຢູ່ຕົ້ນໄມ້ນັ້ນ.

- ຕົ້ນໄມ້ໃຫຍ່ເອີຍ! ຂ້ອຍຂໍເພິ່ງຮົ່ມເງົາຂອງເຈົ້າແດ່ ຂ້ອຍຮ້ອນຫລາຍ ເດີນທາງມາແຕ່ໄກ.

ຕົ້ນໄມ້ກໍ່ປ່ອຍອາກາດເຢັນໆ ອອກໃຫ້ລີງ ແລະ ເສບເພງອີ່ແອດ, ອີ່ແອດ... ໃຫ້ຟັງ.

ບຶດໜຶ່ງກໍ່ເຫັນມະນຸດຍ່າງເຂົ້າມາ.

ທັນໃດນັ້ນຕົ້ນໄມ້ກໍເວົ້າຂຶ້ນດ້ວຍຄວາມຕົກໃຈວ່າ:

- ຂໍຢ່າມາຕັດ, ຖາກ, ຖາງ ແລະ ຈູດພວກເຮົາຖິ້ມເທາະ! ຕະກູນຂອງເຮົາຖືກຕັດຫລາຍ ເກືອບຈະບໍ່ເຫລືອອີກແລ້ວ. ຖ້າທ່ານຕ້ອງການ ເຮົາຈະໃຫ້ອາກາດສົດ, ໝາກ ແລະ ສຽງເພງແກ່ທ່ານ.

ມະນຸດໄດ້ຍິນແນວນັ້ນຈຶ່ງຕອບຕົ້ນໄມ້ຄືນໄປວ່າ:

- ຕົ້ນໄມ້ເອີຍ! ເຮົາບໍ່ໄດ້ມາຕັດພວກເຈົ້າດອກ! ເຈົ້າໃຫ້ອາກາດສົດ, ໃຫ້ໝາກ ແລະ ໃຫ້ຄວາມຊຸ່ມເຢັນແກ່ພວກເຮົາ. ພວກເຮົາຈະປົກປັກຮັກສາບໍ່ໃຫ້ໃຜມາບຸກລຸກທຳລາຍພວກເຈົ້າອີກ.

- ຄັນຊັ້ນ ຂ້ອຍຂໍເຊີນເຈົ້າ ເຂົ້າມາບັງພັກຜ່ອນເອົາມີແຮງກ່ອນແມ, ພວກເຮົາຈະບັນເລງເພງສູ່ເຈົ້າຟັງ.

ຕົ້ນໄມ້ເວົ້າດ້ວຍຄວາມດີໃຈ.



# ເຈົ້າປ່າ

**ແດງ ປະທຸມທອງ**
ມະຫາວິທະຍາໄລແຫ່ງຊາດ

ທ້າວຄຳເຂົ້າດົງ ເພື່ອຊອກຕັດເອົາໄມ້ຊອດນ້ອຍມາເຮັດຂຸ່ຍ. ຂະນະທີ່ຄຳພວມຊອກຫາໄມ້ທີ່ຕ້ອງການຢູ່ນັ້ນ ພໍດີຫລຽວເຫັນເສືອໂຕ່ງຕົວຫນຶ່ງຢືນຢູ່ຕໍ່ຫນ້າຂອງຕົນ. ຄຳຕື່ນຕົກໃຈຈົນສັ່ນ ຄິດຈະແລ່ນຫນີ ແຕ່ເສືອກັບຮ້ອງມາໃສ່ວ່າ :

- ຢຸດກ່ອນ ! ບໍ່ຕ້ອງຢ້ານຂ້ອຍດອກ ຂ້ອຍບໍ່ເຮັດຫຍັງໃຫ້ຜູ້ໃດ ຖ້າຫາກບໍ່ຣາວີສັດ ແລະບໍ່ທຳລາຍປ່າໄມ້ທີ່ອາໄສຂອງພວກຂ້ອຍ.

ທ້າວຄຳຍິ້ມແຫ້ງໆ ຕອບເສືອໄປວ່າ :

- ບໍ່ດອກ! ຂ້ອຍຢາກໄດ້ໄມ້ຊອດພຽງລຳດຽວ ເພື່ອເຮັດຂຸ່ຍໄວ້ເປົ່າຫລິ້ນຊື່ໆ !

ເສືອຍ່າງເຂົ້າມາຊ້າໆ ພ້ອມທັງເວົ້າວ່າ:

- ບໍ່ເປັນຫຍັງ ຂ້ອຍຈະພາເຈົ້າຊອກໄມ້ຊອດທີ່ເຮັດຂຸ່ຍເປົ່າແລ້ວສຽງດັງມ່ວນທີ່ສຸດໃຫ້ເຈົ້າ .

ຄຳບໍ່ລືມຂອບໃຈເສືອ ແລະ ໃຫ້ສັນຍາວ່າ ຈະຫມັ່ນ

ມາຫລິ້ນນຳເສືອອີກໃນໂອກາດຫນ້າ.

ຕໍ່ມາຂ່າວຄາວ ເລື່ອງທ້າວຄຳ ມີຂຸ່ຍສຽງດັງມ່ວນ ກໍໄດ້ຍິນໄປຮອດຫູຂອງທ້າວກິຂີ້ດື້ ຢູ່ທາງບ້ານເຫນືອ, ຈຶ່ງເຂົ້າໄປໃນດົງເພື່ອຊອກໄມ້. ແຕ່ຍ້ອນນິໄສຂີ້ດື້, ເວລາເຂົ້າປ່າ ທ້າວກິ ຟັນຕົ້ນໄມ້ນ້ອຍຊະຊາຍ. ຮ້າຍໄປກວ່ານັ້ນ ກິໃຊ້ກັບໄຟຈູດໃບໄມ້ແຫ້ງຫລິ້ນ ເຮັດໃຫ້ໄຟໄຫມ້ລຸກລາມໄປ. ທັນໃດນັ້ນ ເສືອໂຄ່ງເຈົ້າປ່າໄດ້ປະກົດໂຕ ພ້ອມກັບສົ່ງສຽງຮ້ອງໂກກ ! ໂກກ ! ຄືຈະກັດຈະກິນ. ນາຍເຫັນເສືອຢູ່ໃນທ່າທາງບໍ່ເປັນມິດ ທ້າວກິຕົກໃຈແລ່ນປົບຕາຍອອກຈາກດົງ. ທ້າວຄຳກຳລັງມຸ້ງຫນ້າມາສູ່ດົງເຫັນເສືອໃຊ້ຕີນຂວັດດິນຖົມແປວໄຟ ທີ່ກຳລັງໄຫມ້ປ່າທ້າວຄຳທັກເອົາຝົດໄມ້ຕີໄຟຊ່ວຍເສືອອີກແຮງຫນຶ່ງ. ໄຟມອດລົງ, ທັງສອງເຊົ່າໂຮ່ ! ໂຮ່ ! .

- ເຈົ້າເປັນຄົນດີແທ້ໆ ຖ້າທຸກຄົນເປັນຄືເຈົ້າຫມົດ, ປ່າ ແລະສັດທັງຫລາຍ ຄົງຈະມີຊີວິດຢູ່ຢ່າງເປັນສຸກ! ເສືອເວົ້າຂຶ້ນ.

- ຄັນບໍ່ມີ " **ເຈົ້າປ່າ** " ຄືເຈົ້າປານນີ້ໄຟໄຫມ້ປ່າກໍ້ຽງຫມົດແລ້ວ.

ທ້າວກິຂີ້ດື້ຈູດປ່າ ບໍ່ພຽງແຕ່ບໍ່ໄດ້ຂຸ່ຍ ພ້າກໍເສຍ, ກັບໄຟກໍ່ເຮ່ຍ ຕີນໂຕເຕັມໄປ ດ້ວຍເລືອດຍ້ອນຫນາມຂູດ, ໄມ້ທົ່ງ ແລ່ນກັບເມືອເຮືອນດ້ວຍຄວາມເຈັບປວດ.



# ພະຍາງູສິງ

**ຈັນເພັດ ຄຳຟອງ**
ກົມວັດທະນະທຳມະຫາຊົນ

ຍັງມີກວາງຕົວໜຶ່ງອອກໄປຫາກິນເລີຍຖືກແຮ້ວຂອງນາຍພານກຸ. ພະຍາງູສິງມາເຫັນຈຶ່ງປຶກສາກັບເຕົ່າເພື່ອຊ່ວຍເຫລືອເພື່ອນ.

- ໃຫ້ໂຕເປັນຜູ້ໄປກັດເຊືອກແຮ້ວ, ເຮົາຊິໄປລັດທາງພານກຸໄວ້!

ພະຍາງູສິງ ໄປລັດທາງພານກຸ, ມັນເລືອໄປມໍ່ໆ ແລະ ເວົ້າວ່າ :

- ພານກຸເອີຍ ! ເຈົ້າຈົ່ງເຊົາລ່າສັດສາ, ປ່ອຍໃຫ້ພວກຂ້ອຍມີຄວາມສຸກຢູ່ໃນດົງແຫ່ງນີ້ຕໍ່ໄປເທາະ !

- ໂອ໋! ງູສິງ ພໍດີກູຊິຈັບເອົາມຶງໄປຕົ້ມດງວນີ້!

ພານກຸໄລ່ບຳງູ ແຕ່ກໍບໍ່ທັນຈັກເທື່ອ. ໃຈຮ້າຍເລີຍໜີໄປຢາມແຮ້ວ. ພະຍາງູສິງ ຈຶ່ງຟ້າວມາບອກເຕົ່າ.

- ໂວງ ແດ່ເຕົ່າເອີຍ! ພານກຸມາແລ້ວ! ກັດໄວໆ ໆ ! ໄດ້ຍິນສຽງຂອງງູສິງ ກວາງກໍຕື່ນ ແລະ ຢ້ານຫລາຍຈຶ່ງຖີບຂາໝົດແຮງ, ສາຍແຮ້ວຂາດ ກວາງປົບໜີໄປໄກໆ.

ສ່ວນເຕົ່າກໍເອົາຕົວຫລົບເຂົ້າພຸ່ມໄມ້ໃກ້ໆນັ້ນ. ເຫັນກວາງຫລຸດແລ້ວ ພານກຸໃຈຮ້າຍ ຊອກເຂ່ຍຕາມພຸ່ມໄມ້ ເຫັນເຕົ່າຈຶ່ງຈັບຍັດໃສ່ຖົງຫ້ອຍໄວ້ງ່າໄມ້.

ພະຍາງູສິງເຫັນ ຈຶ່ງບອກກວາງວ່າ:

- ໂຕໄປລໍ້ໃຫ້ພານກຸຫນີກ່ອນ...

ກວາງຟ້າວແລ່ນເຮັດຂາຫ້ານຄະເຍະໆ. ພານກຸຫລຽວເຫັນຈຶ່ງຟ້າວຄວາເອົາຫອກແຫລມຊັດໃສ່, ແຕ່ບໍ່ຖືກ ກວາງທຳທ່າແລ່ນຫນີ, ພານກຸໄລ່ກວາງໄປໄກເຕີບ. ພະຍາງູສິງໄດ້ໂອກາດ ກໍຂຶ້ນກົກໄມ້ກອດກ້ຽວເອົາຖົງເຕົ່າລົງມາ ທັງຫມົດພວກເຂົາກໍພົ້ນໄພອັນຕະລາຍໄປໄດ້.

ພະຍາງູສິງ, ກວາງ ແລະ ເຕົ່າ ຕັດສິນໃຈພາກັນຜ່າຍຫນີໄປຢູ່ບ່ອນອື່ນທີ່ປອດໄພ ພ້ອມທັງຕົກລົງກັນວ່າຈະບໍ່ກັບມາປ່າແຫ່ງນີ້ອີກ ຖ້າຫາກຊາວບ້ານບໍ່ພາກັນເຊົາລ່າສັດປ່າ.

24/7 ห้ามจำหน่าย



# ປ່ອຍລີງ

**ສົມພອນ ພົງສະຫວັດມີໄຊ**
ກົມວັດທະນະທຳມະຫາຊົນ

ມື້ນຶ່ງ ທ້າວກິເຝົ້າສວນກ້ວຍ ລາວເຫັນຝູງລີງກຳລັງກິນຫມາກກ້ວຍຢ່າງເພີດເພີນ. ທ້າວກິທັງຮ້ອງໂຮ ແລະ ຍິງກະຖຸນໄລ່. ພວກລີງຢ້ານ ພາກັນແຕກເຂົ້າປ່າ ຍັງແຕ່ລີງນ້ອຍໂຕຫນຶ່ງແລ່ນບໍ່ໄວ. ບັງເອີນລູກກະຖຸນຂອງທ້າວກິຍິງໄປຖືກຂາລີງນ້ອຍ ເລືອດຊຶມອອກມາ ມັນແລ່ນລາກຂາ. ທ້າວກິຟ້າວແລ່ນນຳ ໃນທີ່ສຸດກໍຈັບລີງນ້ອຍໄດ້.

- ບໍ່ຕ້ອງຢ້ານເດີ ! ຂ້ອຍຈະປິ່ນປົວ ແລະ ລ້ຽງເກືອເຈົ້າຢ່າງດີ. ເວົ້າແລ້ວທ້າວກິ ກໍອູ້ມເອົາລີງລົມນ້ອຍແນບໃສ່ເອິກຢ່າງຖະນຸຖະຫນອມ.

ຫລາຍມື້ຕໍ່ມາ ບາດແຜລີງນ້ອຍຫາຍດີເປັນປົກກະຕິ ແຕ່ຍັງຍ່າງຂາເຄຢູ່. ຍ້ອນລີງນ້ອຍມີນິດໄສກະວັອກກະແວັກ, ທ້າວກິຈິ່ງເອົາເຊືອກຍາວໆ ມັດໃສ່ແອວລີງຕິດກັບເສົາເຮືອນ.

ມື້ນຶ່ງ, ທ້າວກິໄປຊ່ວຍວຽກແມ່, ເມື່ອເຈົ້າຂອງບໍ່ຢູ່ມັນກໍອອກລິດເດດຈົນເຊືອກຂາດ. ມັນເຕັ້ນຂະໂຍງ

ຂະເຍງທ້ອຍໂອ່ນໂຍນຕົວໄປຕາມງ່າພ້າວຢ່າງວ່ອງໄວ ພ້ອມທັງສັ່ນຢ່າງແຮງ. ຮັງນົກທີ່ທ້ອຍຢູ່ງ່າພ້າວ ແກວ່ງໄກວ ລູກນົກຕົກໄປທົ່ວທີບ. ສຽງນົກນ້ອຍຮ້ອງໄຫ້, ຈົ່ມເຈັບ ປວດ, ຂໍຄວາມຊ່ວຍເຫລືອດັງແຈ້ວໆ:

- ໂອຍເຈັບເດ ! ຊ່ວຍແດ່ ! ຊ່ວຍເອົາພວກຂ້ອຍ ຂຶ້ນໄປເທິງຮັງແດ່ທ້ອນ !

- ບິນຂຶ້ນມາເອງຕີ ! ຢ່າອ່ອນແອຫລາຍ ! ເບິ່ງຂ້ອຍ ແມ່ ! ຍ່າງຂາເຄປານນີ້ ກໍຍັງຂຶ້ນມາໄດ້ !

ລີງນ້ອຍເວົ້າແລ້ວກໍ່ສົ່ງສຽງຫົວຢອກລໍ້ອອກມາ ແກວັກ ! ແກວັກ ! ພ້ອມທັງປີດຫມາກພ້າວຖິ້ມລົງຈົນ ຫມົດຕົ້ນ. ມັນໂຕນຢັອດລົງໃສ່ລົກໄກ່ຍິ່ງແຂ້ວແກກແຊກ ຮ້ອງແກວັກໆ. ແມ່ໄກ່ທີ່ກຳລັງຟັກໄຂ່ແຕກຕື່ນກະຕາກ ສຽງຟົດສະນັ່ນກ້ອງຕະລ່າງ. ທ້າວກີ ແລະ ແມ່ໄດ້ຍິນ ຈິ່ງມາເບິ່ງ.

- ລີງນ້ອຍອາລະວາດແລ້ວ ! ທ້າວກີຫ້ວງຂຶ້ນດ້ວຍ ຄວາມຕົກອົກຕົກໃຈ.

- ແມ່ວ່າແລ້ວ ປ່ອຍມັນສາ! ປິ່ນປົວດີແລ້ວກໍປ່ອຍ ມັນໄປຢູ່ປ່າດົງຈະດີກວ່າ !

ເມື່ອໄດ້ຍິນແມ່ເວົ້າ ບວກກັບຄວາມອີດູສົງສານ ທ້າວກີຈຶ່ງຕັດສິນໃຈອູ້ມເອົາລີງນ້ອຍໄປປ່ອຍຢູ່ດົງຫົວ ສາວ ເພື່ອໃຫ້ມັນໄດ້ຢູ່ຢ່າງທຳມະຊາດ.



# ອູດແລນ ແປບປ່າ

**ບຸນທະວີ ໄຄຕະມີ**
ສຶກສາແຂວງຈຳປາສັກ

ທ້າວຄຳສອນ ແລະ ທ້າວບຸນທົງພາກັນຂາດໂຮງຮຽນເຂົ້າປ່າຫາຍິງສັດ. ທັງສອງບຸປ່າຜ່າດົງເຂົ້າໄປ, ບັງເອີນຄຳສອນຮ້ອງຂຶ້ນ.

- ແລນ ! ແລນ ! ຢູ່ເທິງກົກໄມ້ພຸ້ນ !

ຄຳສອນ ແລະ ບຸນທົງ ຢູ່ຄົນລະເບື້ອງຍິງກັບຖຸນສຸມໃສ່ແລນ ສຽງລູກທີ່ນຕຳ ໃສ່ກົກໄມ້ເຕີ່ນອອກປຶດປັດປຶດປັດ ແລນຕື່ນໂດດລົງຫນ້າດິນ, ເລືອເຂົ້າໄປໃນໂກນໄມ້.

- ເຮັດຈັ່ງໃດສອນ ? ທ້າວບຸນທົງຖາມຄຳສອນ

- ໄຟ ! ມັນຊິສູ້ໄຟໄດ້ບໍ ? ຄຳສອນຕອບ

ທັງສອງຫາກິ່ງໄມ້ໃບຫຍ້າມາຍັດເຂົ້າໂກນ ແລ້ວເອົາໄຟອູດ. ແລນທົນບໍ່ໄດ້ຄາດລາດອອກມາ ຄຳສອນໂດດຄຸບຄໍແລນຍໍຂຶ້ນດ້ວຍຄວາມດີໃຈ. ບໍ່ພໍຄາວກໍໄດ້ຍິນສຽງໄມ້ແຕກໂປ້ງປ້າງ, ໂປ້ງປ້າງ...

- ໂອຍ ! ໄຟລາມປ່າແລ້ວ ! ຊ່ວຍກັບມອດ, ຊ່ວຍກັບມອດ!

ພວກເຂົາຫັກຟົດໄມ້ຕີໄຟ ຈົນຫນ້າດຳຕາແດງ

ແຕ່ກໍ່ບໍ່ໄດ້ຜົນ !

ບຶດໜຶ່ງ! ຈັກມີຄົນມາແຕ່ໃສໄວວາມາຊ່ວຍພວກເຂົາມອດໄຟຢ່າງອຶກກະທຶກ. ເມື່ອໄຟມອດລົງ ທັງສອງຈຶ່ງຮູ້ວ່າແມ່ນຄູ ແລະ ໝູ່ນັກຮຽນໂຮງຮຽນຂອງຕົນມາຊ່ວຍ.

ບຸນທິງ ກັບຄຳສອນ ນັ່ງເຊົ່າໂຮ່ໆ ຄູຍ່າງມາຫາແລ້ວເວົ້າວ່າ :

- ພວກເຈົ້າຂາດໂຮງຮຽນແລ້ວ ຍັງມາຈູດປ່າອີກ! ພວກເຈົ້າຈູດເອົາຫຍັງ?

- ຈູດເອົາແລນ! ຄຳສອນຕອບ

- ໃສໂຕແລນ?

- ມັນລັກໜີແລ້ວ. ບຸນທິງຕອບ

ຄູໄດ້ຍິນແນວນັ້ນ ຈຶ່ງເວົ້າກັບບຸນທິງ ແລະຄຳສອນວ່າ :

- ການຫາກິນ, ບໍ່ແມ່ນຊິປ້ຳ, ຊິຈູດ-ອູດເອົາຄືແນວນີ້, ເຫັນບໍ່! ປ່າສະຫງວນຖືກເຜົາໄໝ້ແປ່ນໄປຫລາຍເຕີບ, ຍັງດີທີ່ພວກເຮົາມາຊ່ວຍມອດທັນ. ແຕ່ນີ້ຕໍ່ໄປຢ່າເຮັດອີກ. ພວກເຮົາຄວນຊ່ວຍກັນອະນຸລັກຮັກສາປ່າໄມ້ ແລະສັດປ່າຢ່າຄິດທຳລາຍ.

ຄຳສອນ ແລະ ບຸນທິງ ກົ້ມໜ້າຍອມ ຮັບຜິດ ແລະຍ່າງນຳກັບໝູ່ກັບເມືອໂຮງຮຽນ.



# ແລນອົບພະຍົບ

**ໄຊຊະນະ ຈັນທະອຸດົມ**
ມະຫາວິທະຍາໄລແຫ່ງຊາດ

ມີແລນນ້ອຍສອງໂຕ ຖືກມັດແທບັບຈົນຕີງໂຕບໍ່ໄດ້ຢູ່ໃນກົ້ນກະທໍຫມາກເຜັດ ແລະກົ້ນກະທໍນ້ຳອ້ອຍແຜ່ນເຊິ່ງຖືກເຊື່ອງໄວ້ຢ່າງມິດຊິດຢູ່ກົ້ນລົດໂດຍສານຄັນຫນຶ່ງ. ແລນທັງສອງໂຕລະບາຍຄວາມອຸກອັ່ງຕໍ່ກັນ.

- ຂ້ອຍບໍ່ເຄີຍໄປບຽດບຽນຄົນ ແຕ່ເປັນຫຍັງຄົນຈິ່ງທໍລະມານຂ້ອຍປານນີ້? ແລນໂຕທີ່ຢູ່ກະທໍນ້ຳອ້ອຍເວົ້າ.

- ແທນທີ່ຊິຢູ່ຮ່ວມໂລກກັນຢ່າງມີຄວາມສຸກ, ແຕ່ຄົນພັດມາໄລ່ຈັບພວກເຮົາຄືແນວນີ້ຊິເປັນບໍ? ເວົ້າແລ້ວແລນທັງສອງກໍພາກັນໄຫ້ສະອຶກສະອື້ນ.

- ເຮັດແນວໃດໂຕຈິ່ງມາຢູ່ທີ່ນີ້ໄດ້? ແລນຢູ່ກະທໍນ້ຳອ້ອຍຖາມ, ແລນຢູ່ກະທໍຫມາກເຜັດ ກໍເລົ່າເລື່ອງຕົນສູ່ເພື່ອນຟັງ.

- ເຮົາກຳລັງມັ່ງນບ່ອນນອນຂອງພໍ່ໃນໂພນໄມ້, ໄດ້ຍິນສຽງນັກຕົ້ນໄມ້ດັງປົກ... ປົກໆ ຫນ່າໆ ເຂົ້າ,

ເຮົາສ່ອງເບິ່ງເຫັນທັງຄົນທັງໝາຫຸ້ມຢູ່, ເຮົາຢ້ານສັ່ນຢູ່ວັກໆ ພໍ່ເຮົາຊ້ຳພັດບໍ່ຢູ່, ບໍ່ພໍຖາວຕົ້ນໄມ້ລົ້ມລົງດິນຢ່າງແຮງເຮົາຈິ່ງບັດໄປ. ຮູ້ເມື່ອຄືງກໍ່ຖືກມັດຢູ່ຄືແບບນີ້ແລ້ວເຮົາຄິດຮອດພໍ່ຫລາຍ. ເວົ້າແລ້ວກໍກົ້ມໜ້າໄຫ້ອີກໆ.

ແລນທີ່ຢູ່ກະທໍນ້ຳອ້ອຍເລົ່າຄວາມໂຊກຮ້າຍຂອງຕົນສູ່ໝູ່ຟັງ ວ່າມັນກຳລັງນອນຫລັບຢູ່ໃນໂກນໄມ້ຢ່າງມີຄວາມສຸກກໍຖືກພວກນາຍພານເອົາໄຟອູດ, ໂຕນລົງດິນໝາຫຸ້ມກັດ ແລ້ວກໍຖືກຈັບໄດ້. ແຕ່ມັນພູມໃຈທີ່ໄດ້ຊ່ວຍໃຫ້ແມ່ຂອງມັນຊຶ່ງກຳລັງຖືພາໜີໄປໄດ້.

- ໂຕນີ້ປະເສີດແທ້ໆ ບໍ ຮູ້ຈັກຮັກແມ່, ແລນຢູ່ກະທໍໝາກເຜັດເວົ້າ

ຂະນະທີ່ແລນທັງສອງລົມກັນຢູ່ນັ້ນ, ພໍດີມີພະນັກງານປ່າໄມ້ຂຶ້ນມາກວດລົດໂດຍສານ ແລະ ຢຶດເອົາແລນ ພ້ອມທັງປັບໃໝແມ່ຄ້າແລນ ແລະສຶກສາອົບຮົມບໍ່ໃຫ້ທຳການຊື້ຂາຍສັດປ່າທຸກຊະນິດ, ຖ້າຈັບໄດ້ເທື່ອໜ້າຈະຕັດສິນລົງໂທດຢ່າງໜັກ.

ພະນັກງານປ່າໄມ້ ໄດ້ນຳເອົາແລນທັງສອງໂຕໄປປ່ອຍທີ່ປ່າສະຫງວນແຫ່ງຊາດເຂດ "ດົງຫົວສາວ" ຊຶ່ງເປັນປ່າທີ່ອຸດົມສົມບູນ ແລະ ປອດໄພ.



# ອ້າຍຊ້າງຢູ່ໃສ ?

**ພັນທະບາສອນ ພິນພັກດີ**

ວາລະສານ ວັນນະສິນ

ມື້ໜຶ່ງທ້າວແອັດ ແລະ ທ້າວຕິກ ຖືປືນເຂົ້າມາໃນດົງ. ນາງນົກແກ້ວມາເຫັນຈຶ່ງຮ້ອງບອກໝູ່ວ່າ:

- ມີຄົນມາ ! ມີຄົນມາ !

ທັນໃດນັ້ນ ສຽງປືນກໍດັງປັ້ງ ! ປັ້ງ ! ສອງບາດຊ້ອນກັນ ເຮັດໃຫ້ທ້າວຟານ ນ້ອຍທີ່ໜ້າຮັກລົ້ມຟູບລົງກັບບ່ອນ ແມ່ມັນເຫັນກໍໂດດມາ ເພື່ອຈະຊ່ວຍເອົາລູກແຕ່ທ້າວແອັດ ພັດຍິງປັ້ງ ! ອີກ, ແມ່ຟານ ລົ້ມລົງກັບພື້ນດິນ. ຊ້າງ ແລະ ເສືອເຫັນເປັນແນວນັ້ນ ກໍເຂົ້າມາຫາ.

- ຢຸດກ່ອນ ! ຮູ້ບໍ່ວ່າເຈົ້າຂ້າສັດປ່າ ກໍເໝືອນຂ້າຕົນເອງນັ້ນລະ !

ຊ້າງເວົ້າບໍ່ສຸດຄວາມຊ້ຳສຽງປືນກໍ່ດັງຂຶ້ນ ລູກປືນໄດ້ຕຳໃສ່ທ້ອງມັນ. ເຫັນທ່າບໍ່ດີ ຊ້າງຈຶ່ງບອກສັດທັງຫລາຍວ່າ :

- ພວກເຮົາຈົ່ງພາກັນອອກຈາກດົງນີ້ສາ, ບໍ່ດັ່ງນັ້ນຈະຖືກຄົນບໍ່ດີພວກນີ້ຂ້າໄດ໋! ສັດທັງຫລາຍກໍພາກັນຜ່າຍໜີ. ປ່າແຫ່ງນັ້ນກໍກາຍເປັນດົງທີ່ມິດງຽບ,

ຕົ້ນໄມ້ຕ່າງພາກັນໂສກເສົ້າຫງອມເຫງົາ.

- ພໍ່ໆ ພວກອ້າຍຊ້າງ, ອ້າຍເສືອໄປໃສຫມົດ? ຕົ້ນດູ່ນ້ອຍຖາມພໍ່.

- ໂອລູກຮັກເອີຍ ! ພວກອ້າຍຊ້າງ ອ້າຍເສືອຂອງລູກນັ້ນ ໄດ້ຫນີໄປແລ້ວ ບໍ່ຮູ້ວ່າພວກເຂົາໄປຢູ່ທາງໃດ?

- ຍ້ອນຫຍັງເພິ່ນຈຶ່ງຫນີ ຫລືວ່າເພິ່ນຊັງພວກເຮົາ?

- ມັນບໍ່ແມ່ນແນວນັ້ນດອກ, ຍ້ອນວ່າມີຄົນມາຂ້າພວກເຂົາ.

- ຄັນຊັ້ນຕົ້ນໄມ້ຄືພວກເຮົາຄົນຈະບໍ່ມາທຳຮ້າຍຫວະ ?

- ກໍ່ບໍ່ດົນດອກ ຄົນຈະຕ້ອງມາຕັດມາກິນພວກເຮົາ.

- ຖ້າເປັນແນວນັ້ນ ເຮົາຄວນຫນີໄປນຳອ້າຍຊ້າງ, ອ້າຍເສືອດີບໍ່ ?

- ບໍ່ໄດ້! ບໍ່ໄດ້! ພວກເຮົາເຄື່ອນທີ່ບໍ່ເປັນຄືດັ່ງສັດເຂົາ.

ນັບແຕ່ຊ້າງເສືອຈາກໄປ ບໍ່ດົນຕົ້ນໄມ້ໃຫຍ່ນ້ອຍກໍຖືກຄົນບຸກລຸກທຳລາຍຢ່າງ ຫນັກ, ຫ້ວຍຫນອງຄອງບຶງບົກແຫ້ງລົງ ການທຳມາຫາກິນຂອງຊາວບ້ານລຳບາກ, ທັງພະຍາດກໍເກີດຂຶ້ນ. ໄປຊອກເອົາຕົ້ນໄມ້ໃບຫຍ້າມາປຸງເປັນຢາປົວກໍບໍ່ມີ. ທ້າວແອັດ ແລະ ທ້າວຕົກຈຶ່ງຄິດຮອດຄຳເວົ້າຂອງຊ້າງໃນເມື່ອກ່ອນວ່າ "**ຂ້າສັດປ່າກໍຄືຂ້າຕົນເອງ!**".



# ນົກອະນຸລັກ

**ວຽງໂຊງ ສຸກກະເສີມ**
ມະຫາວິທະຍາໄລແຫ່ງຊາດ

ມີນົກໂຕໜຶ່ງ ອາໄສຢູ່ໜອງນໍ້າໃນເຂດດົງໃຫຍ່, ແຕ່ລະມື້ ມັນອອກມາຈອບກິນປາ ຕາມແຄມໜອງຢ່າງເປັນປະຈໍາ .

ມື້ນີ້ ມັນຍ່າງໄປຊອກຫາກິນຕາມປະສາ, ພໍໄປຮອດກົກໄມ້ໃຫຍ່ແຄມໜອງເບື້ອງຕາເວັນຕົກມັນກໍ່ຕື່ນຕົກໃຈຢ່າງແຮງ ພ້ອມທັງສົ່ງສຽງຮ້ອງຈົນດັງກ້ອງໜອງນໍ້າ.

ທ້າວນ້ອຍບຸນກອງ ກໍາລັງຕຶກເບັດຢູ່ຫລຽວເຫັນນົກຕົວນັ້ນຖືກແຮ້ວ ດິ້ນແດ່ວໆຢູ່.

ທ້າວນ້ອຍບຸນກອງ ເປັນຄົນຮັກນົກຫລາຍ, ລາວຄິດສົງສານ ຈຶ່ງຍ່າງເຂົ້າໄປໃກ້ໆ ປົດສາຍແຮ້ວອອກຈາກຂາຂອງນົກ. ໃນຂະນະທີ່ລາວກໍາລັງປົດສາຍແຮ້ວຢູ່ນັ້ນ ກໍ່ມີເດັກນ້ອຍກຸ່ມໜຶ່ງມາຮອດ ແລະ ຮ້ອງໃສ່ລາວວ່າ :

- ຢ່າປ່ອຍໄດ໋ ! ພວກຂ້ອຍຢາກໄດ້ນົກ ຈຶ່ງເຮັດແຮ້ວມາໃສ່.

- ນົກມັນກໍ່ມີຊີວິດຄືກັບຄົນເຮົານີ້ແຫລະ ປ່ອຍມັນສາ ທ້າວບຸນກອງຕອບ.

- ນີ້ແມ່ນເລື່ອງຂອງພວກຂ້ອຍເວີ່ຍ!. ໃນຂະນະທີ່ພວກເດັກນ້ອຍກຳລັງຖົກຖຽງກັນຢູ່ນັ້ນ, ພໍ່ເຖົ້າຄົນໜຶ່ງຍ່າງມາເຫັນເຫດການນັ້ນ ກໍ່ເລີຍເວົ້າກັບເດັກນ້ອຍນັ້ນວ່າ :

- ພວກຫລານຄວນຟັງຄວາມບຸນກອງປ່ອຍໃຫ້ມັນຫາກິນຕາມພາສາຂອງມັນ ຫລານເອີຍ. ເພາະວ່ານົກນີ້ ເປັນນົກທີ່ຫາຍາກ ແລະ ໃກ້ຈະສູນພັນແລ້ວ! ຖ້າຫາກເຈົ້າໜ້າທີ່ປ່າໄມ້ຈັບໄດ້ໄລ່ທັນ ແມ່ນພວກຫລານຈະຖືກລົງໂທດໄດ໋!

ເມື່ອພວກເດັກນ້ອຍໄດ້ຍິນພໍ່ເຖົ້າເວົ້າແນວນັ້ນກໍ່ເລີຍພ້ອມໃຈກັນປ່ອຍນົກຕົວນັ້ນ ໄປຕາມທຳມະຊາດຂອງມັນ ແລະ ສັນຍາກັບພໍ່ເຖົ້າວ່າ :

- ແຕ່ນີ້ຕໍ່ໄປ ພວກຫລານຈະບໍ່ເຮັດແຮ້ວໃສ່ເອົານົກອີກ.



# ນົກຍູງຟ້ອນງາມ

**ສົນສະຫວັນ ເຄື່ອງເທພາລິດ**

ວາລະສານ ວັນນະສິນ

ທຸກໆ ຄືນວັນເພັງ ພະຈັນເຕັມດວງຫມູ່ດາວເປົ່ງແສງເຫລື້ອມຍິບຍັບໆ ຢູ່ບົນທ້ອງຟ້າ. ຝູງສັດປີກກໍໄດ້ມາພົບກັນຢູ່ລານກາງປ່າດົງແຫ່ງຫນຶ່ງ ແລະຮ່ວມກັນຟ້ອນລຳຢ່າງມ່ວນຊື່ນ. ນົກຍູງໄດ້ຮັບການຕົບມືຍ້ອງຕະຫລອດວ່າ ຟ້ອນງາມທຸກຈັ່ງຫວະ.

ມາວັນເພັງຄືນຫນຶ່ງ ປາກົດວ່າບໍ່ເຫັນນົກຍູງມາຟ້ອນລຳນຳຫມູ່. ຝູງສັດປີກ ໂສກເສົ້າຫງ່ວມເຫງົາ. ໄກ່ປ່າຈຶ່ງຖາມຂຶ້ນວ່າ :

- ເປັນຫຍັງຄືນນີ້ນົກຍູງຈຶ່ງບໍ່ມາຮ່ວມມ່ວນຊື່ນນຳພວກເຮົາ ?

- ນົກຍູງອາດບໍ່ສະບາຍ. ນົກເປົ້າເວົ້າຂຶ້ນດ້ວຍຄວາມເປັນຫ່ວງຫມູ່.

- ຢ່າມົວແຕ່ໂສເລ້ກັນເລີຍ, ພວກເຮົາໄປຫານົກຍູງກັນດີກວ່າ ! ນົກແກ້ວເວົ້າກັບຫມູ່. ແລ້ວກໍ່ພາກັນໄປຫານົກຍູງ.

- ກວາງຟານເອີຍ! ເຫັນນົກຍູງຂ້ອຍບໍ ?

- ນົກເປົ້າເອີຍ! ບໍ່ເຫັນນົກຍູງເຈົ້າດອກ. ກວາງຟານຕອບນົກເປົ້າຄືນ.

ພໍໄປຮອດບ່ອນຫາກິນຂອງນົກຍູງ ຫມູ່ສັດປ່າກໍຕົກຕະລຶງເມື່ອເຫັນນົກຍູງຖືແຮ້ວຢູ່.

- ແມ່ນໃຜມາຫ້າງແຮ້ວໃສ່ນີ້? ໄກ່ຂວາຖາມນົກຍູງ.

ນົກເຄົ້າໄດ້ຍິນ ຈຶ່ງເວົ້າຕັດຂຶ້ນວ່າ :

- ສັດພວກເຮົາບໍ່ມີໃຜຫ້າງແຮ້ວໃສ່ກັນດອກ ນອກຈາກຄົນເທົ່ານັ້ນ !

- ຄົນຫວະ, ນົກເປັດນ້ຳຫ້ວງຂຶ້ນດ້ວຍຄວາມຕົກໃຈ.

- ເອີ! ກະແມ່ນຄົນຫັ້ນແຫລ້ວ ! ນົກກົກໃກ້ຈະສູນພັນເວົ້າຂຶ້ນດ້ວຍຄວາມແຄ້ນໃຈ.

- ມາພວກເຮົາຊ່ວຍກັນກັດແຮ້ວໃຫ້ຂາດ!

ເວົ້າແລ້ວຝູງນົກທັງຫລາຍ ກໍພາກັນເອົາສົບຈິກຕອດເຊືອກແຮ້ວຈົນຂາດ. ນົກຍູງຈຶ່ງມີໂອກາດໄດ້ຟ້ອນລຳ ໃນປ່າເອົາລຳເນົາໄພໃຫ້ສັດຕົວອື່ນໆ ເບິ່ງຊົມດ້ວຍຄວາມມ່ວນຊື່ນອີກ.



# ເດັກຄຳຮູ້

ວຽງພອນ ວິໄລວົງ
ມະຫາວິທະຍາໄລແຫ່ງຊາດ

ຮອດມື້ພັກຮຽນ, ເດັກນ້ອຍບ້ານສະໂບດກຸ່ມໜຶ່ງພ້ອມກັນອອກໄປທ່ຽວປ່າ, ພວກເຂົາເຈົ້າພາກັນເລາະໄປຕາມແຄມຫ້ວຍເຮັຍຕີນດົງໃຫຍ່. ໃນຂະນະທີ່ພາກັນມ່ວນຊື່ນລື້ນເລີງກັບທຳມະຊາດອັນສວຍງາມນັ້ນ, ບັງເອີນເຫັນແລນຕົວໜຶ່ງຄານຂຶ້ນມາຈາກແຄມຫ້ວຍ. ກຸ່ມເດັກນ້ອຍຫລຽວເຫັນຈຶ່ງພາກັນໄລ່ຈັບເອົາ, ແຕ່ແລນຕົວນັ້ນໄດ້ແລ່ນເຂົ້າໂກນໄມ້.

- ເຮົາຕ້ອງຊອກໃບໄມ້ແຫ້ງມາຍັດໃສ່ໂກນ ແລ້ວເອົາໄຟຈູດ. ທ້າວກອງເວົ້າກັບໝູ່.

ພວກເດັກນ້ອຍຕົກລົງ ພາກັນເກັບໃບໄມ້ ແລະ ເສດຂີ້ເຫຍື້ອຍັດໃສ່ໂກນກຽມຈະຈູດ ເພື່ອເອົາແລນ. ຂະນະນັ້ນທ້າວຄຳຮູ້ ຄຶດໄດ້ຄຶດດີແນວໃດ ຈຶ່ງເອີ່ຍປາກຂຶ້ນເວົ້າວ່າ :

- ເຮົາຄິດວ່າບໍ່ຕ້ອງຈູດ ໄຟຈະໄໝ້ລາມໄປທົ່ວທົບ.

ເດັກນ້ອຍທຸກຄົນ ພາກັນຫລຽວເບິ່ງທ້າວຄຳຮູ້

ດ້ວຍຄວາມສິງໃສ ເພາະຫວ່າງຫນຶ່ງນີ້ ທ້າວຄຳຮູ້ກໍ່ຍັງແລ່ນໄລ່ແລນນຳຫມູ່. ທ້າວກອງຜູ້ອອກຄວາມເຫັນກ່ອນຫມູ່ຈຶ່ງເວົ້າຂຶ້ນດ້ວຍຄວາມຢາກຮ້າຍວ່າ :

- ຖ້າເຮົາບໍ່ເອົາໄຟຈູດ ກໍ່ບໍ່ໄດ້ແລນແລ້ວເວີ່ຍ

- ຖ້າເຮົາຈູດໄຟໄຫມ້ຈະໄປເອົາທົ່ວເປັນພູນີ້ແລ້ວແມ່ນໃຜຈະຊ່ວຍພວກເຮົາມອດ. ເຫັນບໍລົມແຮງປານນີ້ຂ້ອຍຢ້ານຈະເປັນຄືບ້ານເຫນືອ ໄຟໄຫມ້ເຮືອນຈົນບໍ່ມີບ່ອນຢູ່, ໄຫມ້ເຫລົ້າເຂົ້າ, ສັດລ້ຽງກໍ່ຕາຍຫມົດ ນັ້ນກໍ່ຍ້ອນຈູດເອົາແລນຫັ້ນລະ !

ເດັກນ້ອຍທຸກຄົນໄດ້ຟັງກໍຄິດຢ້ານເປັນຄືທ້າວຄຳຮູ້ເວົ້າ ຈຶ່ງພາກັນເຊົາອູດແລນ, ດຶງຂີ້ເຫຍື້ອ ແລະ ໃບໄມ້ແຫ້ງອອກຈາກໂກນ ແລ້ວພາກັນກັບບ້ານກັບເຮືອນຂອງໃຜລາວ.



# ທ້າວແດງນ້ອຍ

**ຂັນກາບ ຂັນທະມະສຸວັນ**

ສູນກາງ ຊປປ ລາວ

ແດງນ້ອຍເປັນເດັກກໍ່າພອຍອາໄສຢູ່ນໍາພໍ່ຕູ້, ແມ່ຕູ້. ພໍ່ຕູ້ມັກຊວນແດງນ້ອຍເຂົ້າປ່າເພື່ອຊອກຫາຍິງນົກ, ຍິງກະຮອກ, ໃສ່ແຮ້ວເອົາຫນູ ແລະ ສັດອື່ນໆ ມາເປັນອາຫານ.

ຫລາຍປີຕໍ່ມາແດງນ້ອຍ ໄດ້ເຂົ້າໂຮງຮຽນ. ຄູສອນໃຫ້ຮູ້ຂຽນ ແລະ ອ່ານຫນັງສື. ມື້ຫນຶ່ງຄູສອນວິຊາໂລກອ້ອມຕົວ ເວົ້າເຖິງສັດປ່ານັບທັງສັດນົກ ແລະ ສັດນໍ້າ, ທີ່ຢູ່ອາໄສ ແລະຄຸນປະໂຫຍດຂອງພວກມັນ. ເບື້ອງຕົ້ນແດງນ້ອຍມີຄວາມສັບສົນຫລາຍ ເພາະວ່າພໍ່ຕູ້ກັບນາຍຄູເວົ້າບໍ່ຄືກັນ.

ຄູບອກວ່າບໍ່ໃຫ້ລ່າສັດ ແລະ ຕັດໄມ້ທໍາລາຍປ່າ, ເພາະຈະພາໃຫ້ເກີດຄວາມແຫ້ງແລ້ງ, ສັດປ່າຈະບໍ່ມີບ່ອນຢູ່ອາໄສ.

ສ່ວນພໍ່ຕູ້ ພັດມັກຖາງປ່າເຮັດໄຮ່ ແລະ ເຂົ້າປ່າລ່າສັດ ເປັນຊີວິດປະຈໍາວັນ. ພໍ່ຕູ້ເວົ້າວ່າ ສັດປ່າມັນຢູ່ໃນປ່າ

ບໍ່ແມ່ນຂອງໃຜ, ຜູ້ໃດກໍ່ຫາມາເປັນອາຫານໄດ້.

ແຕ່ນາຍຄູພັດສອນແດງນ້ອຍ ແລະ ເພື່ອນວ່າ ປ່າໄມ້, ສັດປ່າ ແລະ ສັດນໍ້າເປັນຂອງພວກເຮົາທມົດທຸກຄົນ. ດັ່ງນັ້ນ ທຸກຄົນຕ້ອງຮ່ວມແຮງຮ່ວມໃຈກັນອະນຸລັກ ແລະ ປົກປັກຮັກສາ.

ເວລາຜ່ານໄປ ສັດທີ່ເຄີຍມີຢ່າງຫລວງຫລາຍກໍ່ຫລຸດຫນ້ອຍຖອຍລົງ, ການຫາກິນກໍ່ຍາກຂຶ້ນ. ໂຕກວາງ, ໂຕຟານທີ່ຊາວບ້ານເຄີຍໄປໄທ່ໄປລ່າກໍ່ບໍ່ມີໃຫ້ເຫັນຄືກັບຕອນແດງນ້ອຍຍັງເປັນເດັກອີກແລ້ວ. ນໍ້າໃນຫ້ວຍຫລາຍສາຍກໍ່ບົກແຫ້ງ, ປູປາກໍມີບໍ່ຫລາຍຄືເມື່ອກ່ອນ.

ບັດນີ້ແດງນ້ອຍເຂົ້າໃຈແຈ້ງແລ້ວວ່າ ສິ່ງທີ່ຄູສອນນັ້ນແມ່ນຖືກຕ້ອງ ແລະ ມີເຫດມີຜົນ ສົມຄວນທີ່ແດງນ້ອຍກັບເພື່ອນໆ ຈະຕ້ອງໄດ້ຈົດຈຳ ແລະ ກະທຳຄື ຢຸດຕິການຖາງປ່າເຮັດໄຮ່, ບໍ່ລ່າສັດປ່າມາເປັນອາຫານ ແລະ ບໍ່ບຸກລຸກ ທຳລາຍປ່າໄມ້ ຄືແຕ່ກ່ອນເມື່ອຫລັງອີກ.



# ສຽງຈົ່ມຈາກຕົ້ນຈອງ

**ເວີນນະຈິດ ກິດຕິຄຸນ**
ມະຫາວິທະຍາໄລແຫ່ງຊາດ

ມີສຽງດັງອຸ່ມໆ ອອກມາຈາກຕົ້ນໝາກຈອງ ແລະ ຕົ້ນຄໍແລນທີ່ຢືນຢູ່ໃກ້ໆ ກັນ, ຄົນທັງຫລາຍບໍ່ຮູ້ຊໍ້າວ່າ ສຽງນັ້ນແມ່ນສຽງຫຍັງ.

- ກ່ອນນີ້ 40-50 ປີ ຈັ່ງແມ່ນສຸກສະບາຍ, ບໍ່ມີໃຜມາກຸກມາກວນ.

ຕົ້ນໝາກຈອງອາຍຸ 60 ປີ ຈົ່ມຂຶ້ນ, ຕົ້ນຄໍແລນທີ່ຢືນຮຽງຂ້າງໄດ້ຍິນຈຶ່ງຖາມຄືນວ່າ :

- ແມ່ນເຈົ້າທຸກໃຈຫຍັງບໍ ຄືມັກຈົ່ມເຊົ້າຈົ່ມແລງດີແທ້ ?

- ໂອຍ ! ຂ້ອຍນ້ອຍໃຈນໍາຊີວິດພວກເຮົາ ນີ້ແລ້ວ, ຄາວທີ່ລຸງເສືອ, ລຸງຊ້າງຢູ່ນໍາພວກເຮົາ ຄົນທົ່ວດໍາບໍ່ກ້າເຂົ້າມາບ່ອນນີ້ຊໍ້າ! ຕົ້ນຈອງເວົ້າດ້ວຍ ຄວາມອິດເມື່ອຍ.

- ແທ້ບໍ ! ແລ້ວດຽວນີ້ ລຸງເສືອ, ລຸງຊ້າງໄປໃສໝົດ ? ຕົ້ນຄໍແລນຖາມຄືນ.

- ເຈົ້າຫັ້ນມັນເກີດລຸນ ຊິເຫັນຫຍັງ ! ແຕ່ກີ້ໃນ

ປ່າດົງນີ້ ຈັ່ງແມ່ນມ່ວນຊື່ນລື້ນເລີງ. ທຸກເຊົ້າແລງຫມູ່ທະນີ, ລີງ, ຄ່າງ, ໄກ່ປ່າ ພາກັນຮ້ອງບັນຂັບມ່ວນ.

- ບາດດຽວນີ້ ຄືງຽບເຫງົາແທ້ນໍ ! ຕົ້ນຄໍແລນສອຍຂຶ້ນ.

- ພວກຄົນ ທີ່ວດຳມີບັ້ງດຳໆ (ປືນ) ຄັນພວກເຂົາໄດ້ແນບັ້ງອັນນັ້ນລັ່ນຕູ້ມ ! ໃສ່ໃຜແລ້ວ ຢ່າຫວັງເລີຍຊີລອດ ພວກລູງເສືອລຸງຊ້າງຖືກບັ້ງດຳໆ ລັ່ນໃສ່ຕາຍ, ຈຸທີ່ເຫລືອກໍຫນີໄປຢູ່ບ່ອນອື່ນ.

ເຈົ້າວ່າພວກຄົນ ເປັນຕາ ຊັງບໍ່ ? ຕົ້ນຄໍແລນຖາມ, ຕົ້ນຫມາກຈອງ.

- ເວົ້າເລື່ອງຄົນມາແລ້ວ ຂ້ອຍໂລດອຸກໃຈ. ພວກຄົນກໍ່ມີທັງຜູ້ດີ ແລະ ຜູ້ບໍ່ດີ, ພວກເຂົາມາເກັບເອົາຫມາກເຮົາໄປຢ່າງຫລວງຫລາຍ ເຫລືອກິນຈິນເອົາໄປຂາຍ. ອັນຜູ້ໃຫຍ່ບາງຄົນທັ້ນບໍ່ດີແທ້ໆ ມາປ້ຳຮານເອົາຫມາກພວກເຮົາຈົນຫມົດທັງຕົ້ນ.

- ເອີ ! ຕົ້ນຫມາກຈອງເອີຍ, ຂ້ອຍໄດ້ຍິນວ່າດຽວນີ້ ເພິ່ນຫ້າມມາປ້ຳມາຮານເອົາຫມາກພວກເຮົາອີກ. ຖ້າໃຜຝ່າຝືນແມ່ນຖືກໂທດວ່າຊັ້ນ !

- ສາທຸ ! ສາທຸ ຂໍໃຫ້ເປັນຈິງຈັ່ງຊັ້ນທ້ອນ !



# ເບິ່ງຄືປາດນ້ຳຕາ

**ບຸນມີ ອ່ອນໂກສີ**
ສຶກສາ ແຂວງຈຳປາສັກ

ທ້າວຈ່ອງ ລົງຈາກເຮືອນຍ່າງແວະໄປເຮືອນທ້າວອ່ອງ ແລະ ເອີ້ນໃສ່ວ່າ :

- ແລ້ວໆ ບໍ່ອ່ອງ ? ໄປຕີ !

- ເອີແລ້ວໆ.

ທ້າວອ່ອງຕອບ ພ້ອມທັງລົງຂັ້ນໄດ. ທັງສອງຍ່າງມຸ່ງໜ້າຜ່ານປ່າອອກສູ່ທົ່ງນາ ເພື່ອຊ່ວຍພໍ່ແມ່ໃນຍາມວັນເສົາ ແລະວັນອາທິດ. ເມື່ອຮອດຖຽງນາກໍປົງທໍ່ເຂົ້າໄວ້, ເອົາຄວາຍອອກກິນຫຍ້າ, ແລ້ວກໍກັບຄືນສູ່ຖຽງນາ. ທ້າວຈ່ອງຖາມທ້າວອ່ອງວ່າ :

- ຮຽນຈົບປະຖົມແລ້ວ ຈະຮຽນຕໍ່ບໍ? ເຮົາຄິດວ່າຈະຮຽນຕໍ່ມັດທະຍົມຕົ້ນທີ່ປາກເຊ ເຮົາມີເຮືອນພີ່ນ້ອງ, ອ່ອງໄປຮຽນຢູ່ນຳກັນບໍ ?

ອ່ອງໜ້າເສົ້າ ແລະ ບໍ່ຕອບ, ທັງຄິດໃນໃຈວ່ານັບແຕ່ຮຽນ ປໍ 1 ຈົບ ປໍ 5, ເສັ້ນທາງຫາໂຮງຮຽນມັນຊ່າງສະດວກສະບາຍ, ສຸດສາຍທາງເກືອບເວົ້າໄດ້ວ່າ

ບໍ່ມີແສງແດດສ່ອງ. ບໍ່ແມ່ນແຕ່ເສັ້ນທາງສາຍນີ້ເທົ່ານັ້ນ ແມ່ນແຕ່ເສັ້ນທາງບ້ານອື່ນໆ ເຊັ່ນ: ບ້ານຫນອງບຶງ, ນາກອກ, ນາຂາມ, ນາລານ ເຊິ່ງຢູ່ໃນເຂດດົງຫົວສາວ, ລ້ວນແຕ່ມີງ່າໄມ້ສອງຟາກທາງປົ່ງງ່າສາຂາມຸງ ບາງເສັ້ນທາງເຫມືອນດັ່ງກັ້ງຄັນຈ້ອງ ໂດຍສະເພາະໄມ້ແຕ້ຂ່າ, ໄມ້ດູ່, ໄມ້ຮາວ ແລະໄມ້ເປືອຍນັບຊ່າງອຸດົມສົມບູນແທ້ໆ.

ຈ໋ອງຕົບກົ້ນອ໋ອງບາດແຮງໆ ເຮັດໃຫ້ອ໋ອງຕື່ນຍຸບ!

- ເຮົາຖາມໂຕ ເປັນຫຍັງບໍ່ຕອບ ?

- ເຮົາຍັງຄິດຮອດບ້ານ, ໂຮງຮຽນ ແລະ ເສັ້ນທາງທີ່ຫຽວຮຽນ. ອ໋ອງເວົ້າ

- ອ້າວ, ປ 5 ເຮົາກໍຍັງບໍ່ທັນຈົບ, ມີແຕ່ຖາມກັນຊື່ໆ. ຈ໋ອງເວົ້າແລ້ວຫົວ.

ໃນຂະນະທີ່ຈ໋ອງກັບອ໋ອງ ພ້ອມດ້ວຍຫມູ່ຄູ່ກຳລັງຮຽນຢູ່ປະຖົມປີສຸດທ້າຍຍັງອີກເດືອນຫນຶ່ງຈະເສັງຈົບ, ແຕ່ແລ້ວໄມ້ແຕ້ຂ່າ, ໄມ້ດູ່ທີ່ເປັນປ່າດົງປົກຄຸມເສັ້ນທາງຍ່າງໄປໂຮງຮຽນແຕ່ລະມື້ ກໍຖືກຕັດ ແລະ ຂົນມາກອງໄວ້ພ້ອມທັງອະນາໄມໃຫ້ສະອາດ. ຈ໋ອງ ແລະອ໋ອງ ຍ່າງຕາກແດດໄປໂຮງຮຽນ ເອົາປຶ້ມປົກຫົວ, ຫລຽວເຫັນຕໍແຕ້ຂ່າ, ຕໍດູ່, ມີຢາງຍ້ອຍ ເບິ່ງຄືຢາດນ້ຳຕາທີ່ອາໄລອາວອນ ແລະ ເຈັບປວດຈັ່ງຊັ້ນແຫລະ !



# ນົກເຂົາຄືນຄອນ

**ອຸດອນ ສີມຸນຕີ**
ມະຫາວິທະຍາໄລແຫ່ງຊາດ

ຄຳນ້ອຍນັ່ງຢູ່ປາຍຊານຖຽງນາ ຫັນໜ້າໄປທາງປ່າທົ່ວນາ ສາຍຕາແນມເບິ່ງ ຝູງນົກທີ່ພວມບິນເວີ່ນຢູ່ທ້ອງຟ້າຍາມຕາເວັນໃກ້ຈະຄ່ຳ. ດາວໜຶ່ງຄຳນ້ອຍກໍ່ຮ້ອງຖາມພໍ່ວ່າ :

- ອີ່ພໍ່ນົກສອງໂຕຈັບຢູ່ນັ້ນ ແມ່ນນົກອີ່ຫຍັງ ?
- ນົກເຂົາຕ໋ວາລູກ.
- ອັນ... ອັນ ມັນຂັນ "ກຸກກູ໋ ກູ..." ນັ້ນບໍພໍ່ ?
- ເອີແມ່ນແລ້ວ !
- ມັນຂັນມ່ວນເນາະພໍ່, ມື້ອື່ນມັນກໍ່ຈະມາຈັບຢູ່ນີ້ອີກບໍ ?
- ມາແທ້, ເພາະວ່າ ຮັງນອນຄອນເກົ່າຂອງມັນຢູ່ເທິງຕົ້ນໄມ້ຫັ້ນເດ.

ຂະນະທີ່ຄຳນ້ອຍກຳລັງລົມກັບພໍ່ຢູ່ນັ້ນ ກໍ່ໄດ້ຍິນສຽງປືນດັງ "ປັ້ງ" ບາດໜຶ່ງ. ພ້ອມກັບສຽງປືນນັ້ນກໍ່ເຫັນນົກຕົວໜຶ່ງບິນໜີ, ສ່ວນອີກຕົວໜຶ່ງບິນທົ່ວສັກ

ລົງມາ ຕົກຕໍ່ຫນ້າຄຸງາບາ. ຄຳບ້ອຍເຫັນກໍ່ແລ່ນໄປ ເອົາທັນທີ ພ້ອມທັງເວົ້າກັບນົກວ່າ :

- ນົກເອີຍ ! ບໍ່ຕ້ອງຢ້ານ, ຂ້ອຍມາຊ່ວຍເຈົ້າແລ້ວ

ຄຳບ້ອຍຟ້າວເອົານົກເຂົາທີ່ຖືກຍິງ ມາໃຫ້ພໍ່ເບິ່ງ.

- ອີ່ພໍ່... ! ອີ່ພໍ່... ! ນົກຖືກຍິງ.

- ໂອຍ ! ໂອຍໆ ຕາຍແລ້ວ ! ແມ່ນຜູ້ໃດບໍ່ຄືມາໃຈດຳ ອຳມະຫິດແທ້ !

- ອີ່ພໍ່ມັນຈະຕາຍບໍ ? ຄຳບ້ອຍຖາມ

- ບໍ່ຕາຍດອກ. ມັນຖືກຍິງປີກຫັກຊື່ໆ

- ຫນ້າອີ່ຕົນມັນເບາະ. ມັນຄືຊິເຈັບ.

- ມັນກໍ່ເຈັບຫັ້ນແລ້ວລູກເອີຍ.

- ໄປ... ໄປເອົາຢາມາໃສ່ໃຫ້ມັນ. ແຕ່ລະມື້ ຄຳບ້ອຍເອົາໃຈໃສ່ລ້ຽງດູນົກເຂົາເປັນຢ່າງດີ. ສາມ ອາທິດຕໍ່ມາ ເຫັນວ່ານົກແຂງແຮງດີແລ້ວ, ຄຳບ້ອຍ ກໍ່ເອົານົກເຂົາໄປປ່ອຍຫາຫມູ່ຂອງມັນຄືນ. ທຸກແລງ ກ່ອນຕາເວັນຈະຕົກດິນ ຄຳບ້ອຍຍັງເຫັນນົກເຂົາຄູ່ນັ້ນ ບິນຄືນມາຈັບຄອນເກົ່າຄືກັບທຸກໆ ມື້ທີ່ຜ່ານມາ.



# ເປັດນ້ຳໂຊກດີ

**ວັນນາ ອຸດໄທປະທຸມມາ**
ມະຫາວິທະຍາໄລແຫ່ງຊາດ

ຢູ່ໜອງນ້ຳແຫ່ງໜຶ່ງ ໃນເຂດປ່າສະຫງວນ "ດົງຫົວສາວ" ຂະນະທີ່ແມ່ເປັດນ້ຳພາລູກຫາກິນຢູ່ຕາມໜອງນ້ຳ ບັງເອີນເຫັນພໍ້ເປັດນ້ຳຜູ້ຕົວໜຶ່ງກຳລັງຖືກແຮ້ວ.

- ຊ່ວຍຂ້ອຍແດ່ ແມ່ເປັດກ່າເອີຍ. ເປັດຜູ້ຂໍຮ້ອງ

- ເຈົ້າຈະໃຫ້ຂ້ອຍແນວໃດ ? ແມ່ເປັດນ້ຳຖາມ

- ຊ່ວຍແກ້ເຊືອກມັດຂາຂ້ອຍນີ້ໃຫ້ແດ່.

ແມ່ເປັດນ້ຳຊ່ອຍປົດເຊືອກ ທີ່ມັດຂາເປັດນ້ຳຜູ້ຕົວນັ້ນ. ທັນໃດນັ້ນ ທ້າວນ້ອຍເຈົ້າຂອງແຮ້ວມາພໍ້.

- ແມ່ເປັດນ້ຳເຈົ້າຈະເຮັດຫຍັງຫັ້ນ ?

- ຂ້ອຍກຳລັງແກ້ເຊືອກໃຫ້ເປັດນ້ຳຜູ້. ແມ່ເປັດຕອບທັງຢ້ານສັ່ນ ແລະ ຕົກໃຈ.

- ຢຸດດຽວນີ້ ! ຖ້າບໍ່ເຊົາຂ້ອຍຈະເອົາລູກເຈົ້າຟາດລົງໃສ່ດິນໃຫ້ຕາຍ! ທ້າວນ້ອຍຂູ່ເປັດແມ່.

ແມ່ເປັດນ້ຳຂໍຮ້ອງອ້ອນວອນ ທ້າວນ້ອຍໃຫ້ເຫັນໃຈ

ແລະປ່ອຍລູກຂອງມັນ ແຕ່ທ້າວນ້ອຍບໍ່ຍອມ. ໃນຂະນະນັ້ນ, ກໍ່ມີພໍ່ເຖົ້າຄົນໜຶ່ງຍ່າງຜ່ານມາ ແມ່ເປັດນ້ຳຈຶ່ງເອີ້ນຂໍຮ້ອງໃຫ້ພໍ່ເຖົ້າຊ່ວຍແກ້ໄຂ.

- ພໍ່ເຖົ້າເອີຍ! ຊ່ວຍເມດຕາຊ່ວຍເວົ້າກັບທ້າວນ້ອຍປ່ອຍພວກຂ້ອຍແດ່.

- ເປັນຫຍັງ ເຈົ້າຈຶ່ງມາຂໍຮ້ອງຂ້ອຍ! ຂ້ອຍກໍ່ຕ້ອງການເຈົ້າເປັນອາຫານຄືກັນ.

ແມ່ເປັດຮ້ອງໄຫ້ອ້ອນວອນ ແລ້ວອ້ອນວອນອີກ ແຕ່ບໍ່ໄດ້ຜົນ. ໂຊກດີ ມີພະນັກງານປ່າສະຫງວນມາພໍ້ ຈຶ່ງບອກໃຫ້ຄົນທັງສອງປ່ອຍເປັດນ້ຳປີກຂາວເປັນອິດສະຫລະ ເພາະມັນເປັນສັດຫວງຫ້າມ ແລະ ໃກ້ຈະສູນພັນ. ທັງສອງຄົນຖືກເຈົ້າໜ້າທີ່ປ່າໄມ້ສຶກສາອົບຮົມ ຈຶ່ງປ່ອຍໂຕໄປ, ພ້ອມທັງໄດ້ໃຫ້ຄຳສັນຍາວ່າ ຈະບໍ່ທ້າງແຮ້ວໃສ່ນົກເປັດຢູ່ໜອງນ້ຳແຫ່ງນັ້ນອີກ.



# ບາຍພານກັບໝາໝານ

**ສົມຫວັງ ບະວົງສົບ**

ມະຫາວິທະຍາໄລແຫ່ງຊາດ

ຢູ່ດົງແຄມນາລຸງຄຳແດງ ມີສັດປ່າ ທີ່ຫາຍາກ ແລະ ໃກ້ຈະສູນພັນຫລາຍຊະນິດອາໄສຢູ່. ເພາະທາງບ້ານເພິ່ນຫ້າມຄົນເຂົ້າມາຕັດໄມ້, ໄລ່ລ່າສັດຢ່າງຊະຊາຍຄືຢູ່ບ່ອນອື່ນໆ.

ຢູ່ມາວັນໜຶ່ງ, ມີນາຍພານບຸນມາ ລັກລອບເຂົ້າໄປໃນດົງ ພ້ອມກັບໝາພານຄູ່ຊີບ ເພື່ອລ່າສັດປ່າເປັນອາຫານ ແລະ ເອົາໄປຂາຍ. ບໍ່ວ່າຈະເປັນສັດນ້ອຍສັດໃຫຍ່; ວ່າແຕ່ ເຫັນພານຕາແມ່ນເອົາໝົດ. ໝາຢ່າງອອກໜ້າໝົ້ນເຂົ້າໃນປ່າຊອກດົມກິ່ນ, ບໍ່ພໍຄາວມັນກໍ່ໄລ່ແລນຂຶ້ນກົກເປືອຍສູງລຳໜຶ່ງ, ໝາແຫງນໜ້າເບິ່ງ ແລະເຫົ່າໂງ່ງ ! ໂງ່ງ! ນາຍພານບຸນມາໄດ້ຍິນສຽງໝາເຫົ່າກໍ່ຍ່າງເຂົ້າໄປເບິ່ງ ເຫັນແລນສໍ່ານີ້ແຄ່ງກຳລັງປີນຂຶ້ນງ່າປາຍສຸດ, ລາວຫົວຍຸ້ມໆ ຢູ່ໃນໃຈ, ເພາະຈັ່ງໃດແລງມື້ນີ້ ກໍຕ້ອງໄດ້ກິນກ້ອຍແລນແທ້ໆ.

ບໍ່ລໍຊ້າ, ນາຍພານບຸນມາຟ້າວເອົາ ຂວານທີ່ແບກ

ຢູ່ບ່າມາບັກທັບທີ ຄາວຫນຶ່ງໄມ້ເປືອຍລຳງາມກໍ່ລັ່ນ ແກ່ະ ! ແກ່ະ ... ! ໂຕແລນຕື່ນໄມ້ຫັກກໍ່ໂຕນລົງດິນກ່ອນ ທີ່ຕົ້ນເປືອຍຈະລົ້ມ. ຫມາເຫັນແລນໂຕນລົງກໍ່ໂດດ ເຂົ້າໄປໃສ່ ທັນທີ ພໍດີໄມ້ຫັກຫົ້ມ ! ລົງທັບຫມາ ຕາຍຄາບ່ອນ. ສ່ວນໂຕແລນແລ່ນຫນີເຂົ້າປ່າໄປຈ້ອຍ.

ນາຍພານບຸນມາຢືນຕົກສະເທື້ ເມື່ອເຫັນຫມາຕົນ ເອງຖືກໄມ້ທັບ ທັງຄິດເສຍໃຈ ແລະ ຢາກຮ້າຍໃຫ້ຕົນເອງ.

ນັບແຕ່ນັ້ນມາ, ພານບຸນມາກໍ່ບໍ່ໄດ້ອອກປ່າຫາ ລ່າສັດອີກເລີຍ.



# ສິ່ງແມ່ຂ້ອຍສາ

**ອ່ອນສີ ປະຊາວົງ**
ກົມວັດທະນະທຳມະຫາຊົນ

ຂ້ອຍມີຊື່ ວ່າ ບາງທະນີ
ທຸກເຕັມທີ ນ້ຳຕາລິນລັ່ງ
ແສນອຸກອັ່ງ ເຈົ້າຈັບຂ້ອຍມາ
ພາກມາບດາ ຂ້ອຍນີ້ລຳບາກ

ຈຳໃຈຈາກ ແມ່ຂ້ອຍແລນາ
ຢ່າອິດສາ ຂ້ອຍຍັງອ່ອນນ້ອຍ
ແມ່ຂອງຂ້ອຍ ຈະຂາດໃຈຕາຍ
ຮ້ອງວິນວາຍ ໃນດົງດ່ານດ້າວ

ຫິວນົມຫ້າວ ໃຜເດຊິອີ່ມ
ຂ້ອຍຢາກນົມ ເຄີຍດູດເມື່ອກ່ອນ
ຄິດເຖິງບ່ອນ ຕົ້ນໄມ້ໃບໜາ
ສິ່ງຂ້ອຍສາ ຂ້ອຍຄິດຮອດແມ່




The Global Association for People and the Environment

**GAPE**